# ໂຮງຮຽນວັນອາທິດ

**ວັນອາທິດ ທີ 1 ພຶສຈິກາ 2020 (11-01-2020)**

## ຍຶດໝັ້ນຕໍ່ພຣະຄຳຂອງພຣະເຈົ້າ.

ຖ້າທ່ານຂຽນປື້ມກ່ຽວກັບການເຕີບໂຕເປັນຜູ້ໃຫຍ່ທ່ານຈະໃຫ້ຄຳແນະນຳແບບໃດ?

**ຈຸດສຳຄັນໃນບົດຮຽນ:** ພຣະຄຳຂອງພຣະເຈົ້າເປັນຂໍ້ແນະນຳທີ່ເຊື່ອຖືໄດ້ສຳລັບການດຳເນີນຊີວິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ມັນເປັນສິ່ງທີ່ຂັດເຄືອງໃຈເມື່ອມີຄວາມຮູ້ສຶກວ່າທ່ານກຳລັງນັ່ງຢູ່ໃນຫ້ອງຮຽນທີ່ທ່ານຮູ້ຈັກວິຊານັ້ນດີກ່ວາອາຈານທີ່ສອນ. "ທ່ານຄວນຈະເປັນຜູ້ທີ່ຮອບຮູ້ໃນວິຊານີ້ບໍ່ແມ່ນບໍ?"

ເປັນເວລາຫຼາຍປີ, ບາງຣັດທີ່ຂາດຄຣູສອນໄດ້ສະເໜີອະນຸຍາດໃບຢັ້ງຢືນການສິດສອນສຸກເສີນ, ເຊິ່ງເປັນການອະນຸຍາດໃຫ້ຄຣູຫຼືອາຈານທີ່ບໍ່ມີຄຸນນະວຸດທິສອນໃນໂຮງຮຽນຣັດ. ໃນປີ 2018, ຣັດນຶ່ງຕ້ອງອອກໃບຢັ້ງຢືນດັ່ງກ່າວຫຼາຍກ່ວາສອງພັນໃບ. ມັນອາດຈະດີກ່ວາບໍ່ມີຄຣູສອນເລີຍ, ແຕ່ພໍ່ແມ່ຕ້ອງການຢາກຈະຮູ້ວ່າຄຣູຜູ້ທີ່ກຳລັງສອນຄະນິດສາດໃຫ້ລູກຂອງພວກເຂົາຮູ້ຈັກກ່ຽວກັບວິຊາຂອງພວກເຂົາຫຼືບໍ່.

ໃນເມື່ອມັນມາເຖິງການສິດສອນ, ພວກເຮົາຕ້ອງການຂໍ້ມູນທີ່ໜ້າເຊື່ອຖືເມື່ອເວົ້າເຖິງວິທີການດຳເນີນຊີວິດ, ພວກເຮົາໄດ້ພົບມາຫຼາຍກັບເຈົ້າໜ້າທີ່ທີ່ປະກາດຕົວເອງກ່ຽວກັບເຣື່ອງນີ້. ຖ້າເຮົາຈະເອີ້ນພວກຄຣູສອນນັ້ນວ່າຜູ້ຊ່ຽວຊານກໍ່ບໍ່ເປັນຫັຍງຖ້າພວກເຮົາກຳລັງເຮັດເຂົ້າໜົມ, ແຕ່ພວກເຮົາຕ້ອງພິຈາລະນາຢ່າງລະມັດລະວັງວ່າພວກເຮົາຈະໃຫ້ບໍລິຫານອັນໃດແດ່ເພື່ອທີ່ຈະໄດ້ຮັບຊີວິດນິລັນດອນ.

ພວກເຮົາມີຄວາມຮອບຮູ້ນັ້ນໃນພຣະຄັມພີ. ພຣະເຈົ້າໄດ້ເປີດເຜີຍພຣະອົງເອງໃຫ້ພວກເຮົາຜ່ານທາງພຣະວັຈນະຂອງພຣະອົງ, ແລະພຣະອົງເປັນພຽງຜູ້ດຽວເທົ່ານັ້ນທີ່ເປັນແຫຼ່ງແລະສິດອຳນາດທີ່ຈະຟັງ. ພຣະຄັມພີໃຫ້ຄຳຕອບທີ່ພວກເຮົາຕ້ອງການ.

**ພຣະຄຳພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

## <u>ສຶກສາພຣະຄັມພີ</u>

### 1. ເພງສັດເສີນ 119:1-4

1.ບັນດາຜູ້ທີ່ດີຮອບຄອບໃນທາງຂອງຕົນກໍເປັນສຸກຄືຜູ້ທີ່ດຳເນີນຕາມພຣະທັມຂອງພຣະເຈົ້າ. *2.* ຜູ້ທີ່ຮັກສາພຣະໂອວາດຂອງພຣະອົງກໍເປັນສຸກຄືຜູ້ທີ່ສແວງຫາພຣະອົງດ້ວຍສິ້ນສຸດໃຈ. *3.* ຜູ້ທີ່ບໍ່ເຮັດຜິດແຕ່ດຳເນີນຕາມທາງຂອງພຣະອົງ *4.* ພຣະອົງໄດ້ຊົງຕັ້ງຂໍ້ບັງຄັບຂອງພຣະອົງໄວ້ໃຫ້ເຮົາທັງຫຼາຍປະຕິບັດຕາມຢ່າງເຄັ່ງຄັດ.

ບົດເພງສັດເສີນ 119 ແມ່ນຂໍ້ພຣະຄັມພີຫຼັກທີ່ຊີ້ໄປເຖິງພຣະຄຳຂອງພຣະເຈົ້າວ່າເປັນຄຳແນະນຳແລະມີສິດອຳນາດສູງສຸດຕໍ່ພວກເຮົາ. ໂດຍໄດ້ຮັບການຊີ້ນຳຈາກພຣະວິນຍານບໍຣິສຸດ, ຜູ້ຂຽນບົດເພງສັດເສີນໄດ້ຊີ້ໃຫ້ເຫັນຄວາມພຽງພໍຂອງຖ້ອຍຄຳຂອງພຣະເຈົ້າວ່າເປັນແຫຼ່ງຊີວິດທີ່ລ້ຳຄ່າ, ຄວາມຊົມຊື່ນຍິນດີ, ແລະຄວາມສງົບສຸກ. ສອງຄັ້ງໃນຂໍ້ຄວາມນີ້ທີ່ຜູ້ຂຽນໄດ້ໃຊ້ຄຳສັບທີ່ສຳຄັນ: ດີໃຈ. ຄຳສັບນີ້ມີຄວາມໝາຍຫຼາຍຢ່າງສຳລັບຜູ້ອ່ານໃນສມັຍປັດຈຸບັນ, ແຕ່ຄຳນີ້ໃນພາສາເຮັບເຣີຕົ້ນສະບັບນີ້ມີຄວາມໝາຍທີ່ຊີ້ໃຫ້ເຫັນຄວາມຄິດທີ່ພໍໃຈຢ່າງເຕັມທີ່. ພຣະເຢຊູໄດ້ໃຊ້ຄຳເວົ້າທີ່ຄ້າຍຄືກັນນີ້ໃນຄຳເວົ້າອ້ອມຄ້ອມໃນເວລາທີ່ພຣະອົງກ່າວວ່າ, "ຜູ້ໃດທີ່ຍາກຈົນຝ່າຍຈິດວິນຍານກໍເປັນສຸກ"... "ຜູ້ໃດໂສກເສົ້າກໍເປັນສຸກ"... "ຜູ້ໃດອຶດຫິວຄວາມຊອບທັມກໍເປັນສຸກ"...; ແລະຂໍ້ພຣະຄຳອື່ນໆອີກໃນ (ມັດທາຍ 5:3-11).

ໃນເວລາຜູ້ຂຽນບົດເພງສັຣເສີນໄດ້ຂຽນວ່າ, “ຜູ້ທີ່ດີຮອບຄອບໃນທາງຂອງຕົນກໍເປັນສຸກ" (ຂໍ້ 1), ຜູ້ຂຽນໄດ້ເວົ້າວ່າບຸກຄົນທີ່ເດີນໄປໂດບບໍ່ມີຄໍາຕໍາໜິຕິຕຽນຈະຮັບກຽດອັນສູງສົ່ງໃນສັງຄົມມະນຸດ, ພວກເຮົາສາມາດພຽງແຕ່ຈະຊອກຫາວິທີທາງທີ່ຈະບໍ່ມີຂໍ້ຕໍາໜິຕິຕຽນໂດຍການຕິດຕາມພຣະຄໍາຂອງພຣະເຈົ້າ; ຕໍ່ຈາກນັ້ນພວກເຮົາມີຄວາມ “ດີໃຈແທ້ໆ" ອັນໃດທີ່ເປັນຄໍາເວົ້າທີ່ມີຄວາມໝາຍທີ່ເລິກເຊິ່ງທີ່ພວກເຮົາພຽງແຕ່ສາມາດພົບປະສົບການທີ່ສູງສຸດ, ປະສົບການຂອງມະນຸດທີ່ໄດ້ຮັບພຣະພອນຫຼາຍທີ່ສຸດໃນໂລກນີ້ນັ້ນແມ່ນການເດີນໄປ “ຕາມຄໍາແນະນໍາຂອງພຣະຜູ້ເປັນເຈົ້າ!" ແຕ່ຕໍ່ແຕ່ນັ້ນ, ຜູ້ຂຽນບົດເພງສັຣເສີນໄດ້ກ່າວເຖິງຂອບເຂດທີ່ພວກເຮົາຈໍາເປັນທີ່ຕ້ອງໄດ້ເດີນຕາມຖ້ອຍຄໍາຂອງພຣະເຈົ້າ. "ຜູ້ທີ່ຮັກສາພຣະໂອວາດຂອງພຣະອົງກໍ່ເປັນສຸກຄືຜູ້ທີ່ສແວງຫາພຣະອົງດ້ວຍສິ້ນສຸດໃຈ" ( ຂໍ້ 2). ຊີວິດທີ່ບໍ່ມີຕໍາໜິເປັນຊີວິດທີ່ໃຫ້ຄໍາໝັ້ນສັນຍາກັບພຣະເຈົ້ານຶ່ງຮ້ອຍເປີເຊັນ. ເວົ້າອີກຢ່າງນຶ່ງ, ພວກເຮົາຈະບໍ່ພົບເຫັນພຣະພອນທີ່ຍິ່ງໃຫ່ຽທີ່ສຸດໃນຊີວິດຂອງພວກເຮົາຖ້າພວກເຮົາບໍ່ຊອກສແວງຫາພຣະຜູ້ເປັນເຈົ້າແລະຖ້ອຍຄໍາຂອງພຣະອົງດ້ວຍຄວາມຕັ້ງໃຈຢ່າງຈິງໃຈ. ພຣະພອນຈະປະກົດມີມາເມື່ອຈິດໃຈຂອງພວກເຮົາຢູ່ໃນພຣະວັດຈະນະຂອງພຣະເຈົ້າ. ພຣະເຢຊູໄດ້ກ່າວໄວ້ວ່າ, “ຜູ້ມີໃຈບໍຣິສຸດກໍເປັນສຸກ” ( ມັດທາຍ 5:8). ເມື່ອຫົວໃຈຂອງພວກເຮົາອຸທິດຕົນຢ່າງບໍຣິສຸດຕໍ່ພຣະເຈົ້າ. ພວກເຮົາຈະສາມາດໄດ້ຮັບແລະມີປະສົບການກັບພຣະພອນທີ່ຍິ່ງໃຫ່ຽທີ່ສຸດ. ໃນແຕ່ລະຄັ້ງ, ພວກເຮົາຈະເຫັນຄວາມຈິງຂໍ້ນີ້; ການເຊື່ອຟັງຢ່າງເຄັ່ງຄັດຕໍ່ຖ້ອຍຄໍາຂອງພຣະເຈົ້າຈະນໍາພຣະພອນມາໃຫ້ພວກເຮົາ. ຂ້າພະເຈົ້າໄດ້ພົບເຫັນວ່ານີ້ເປັນຄວາມຈິງທີ່ແນ່ນອນ. ຂ້າພະເຈົ້າຍັງໄດ້ຮຽນຮູ້ອີກວ່າການສແວງຫາຄວາມສົມບູນຂອງຊີວິດນອກຈາກການເຊື່ອຟັງພຣະຄໍາຂອງພຣະເຈົ້າແລ້ວບໍ່ມີສິ່ງອື່ນໃດທີ່ດີກ່ວານີ້. ບໍ່ມີສິ່ງໃດ. ເມື່ອຂ້າພະເຈົ້າຫຼີກລ້ຽງຈາກຄໍາສັ່ງຂອງພຣະເຈົ້າ, ມັນເຮັດໃຫ້ເກີດຄວາມຫວ່າງເປົ່າແລະປະສົບການຂອງຊີວິດບໍ່ເຄີຍມີຄວາມເພິ່ງພໍໃຈເລີຍ. ໃນທາງກົງກັນຂ້າມ, ການເຊື່ອຟັງດ້ວຍຄວາມພາກພຽນອົດທົນຕໍ່ພຣະຄໍາແລະພຣະບັນຊາຂອງພຣະເຈົ້າມັນໄດ້ໃຫ້ສິ່ງທີ່ຂ້າພະເຈົ້າປາຖນາໄວ້ແທ້ໆ. ພຣະພອນ.

2. **ເພງສັນລະເສີນ 119:5-8**

*5.* ໂອຂໍໃຫ້ທາງທັງຫຼາຍຂອງຂ້ານ້ອຍໝັ້ນຄົງໃນການຮັກສາກົດເກນຂອງພຣະອົງ. *6.* ແລະຂ້ານ້ອຍຈະບໍ່ຮັບຄວາມ
ອາຍໂດຍຈົດຈໍ່ຢູ່ທີ່ພຣະບັນຍັດທັງປວງຂອງພຣະອົງ. *7.* ຂ້ານ້ອຍຈະສັຣເສີນພຣະອົງດ້ວຍໃຈທີ່ທ່ຽງຕົງເມື່ອຂ້າ
ນ້ອຍຮຽນຮູ້ກົດໝາຍອັນຊອບທໍາຂອງພຣະອົງ. *8.* ຂ້ານ້ອຍຈະຖືກົດເກນຂອງພຣະອົງຂໍຢ່າຊົງຖິ້ມຂ້ານ້ອຍເລີຍ.

ຄວາມອັບອາຍແມ່ນນຶ່ງໃນອາວຸດທີ່ຍິ່ງໃຫ່ຽຂອງຊາຕານ. ຊາຕານໃຊ້ຄວາມອັບອາຍຄວບຄຸມອາລົມຄວາມຮູ້ສຶກຂອງພວກເຮົາເຮັດໃຫ້ພວກເຮົາຮູ້ສຶກຕົວວ່າບໍ່ມີຄ່າພໍທີ່ຈະນະມັສການພຣະເຈົ້າ, ຕິດຕາມພຣະເຈົ້າ, ຫຼືແມ່ນແຕ່ຈະຮູ້ຈັກ ພຣະເຈົ້າ. ຊາຕານໃຊ້ຄວາມອັບອາຍເປັນອາວຸດເພື່ອເຮັດໃຫ້ພວກເຮົາເຫັນຄຸນຄ່າຕົວເອງຕໍ່າແລະເຊື່ອວ່າພວກເຮົາບໍ່ສົມຄວນກັບຄວາມຮັກຂອງພຣະເຈົ້າ.

ຂ້າພະເຈົ້າຕ້ອງການທີ່ວາດພາບຄວາມແຕກຕ່າງລະຫວ່າງຄວາມອັບອາຍແລະຄວາມເຊື່ອໝັ້ນ. ຄວາມເຊື່ອໝັ້ນບໍ່ຄືກັນກັບຄວາມຮູ້ສຶກອັບອາຍ. ຄວາມອັບອາຍແມ່ນບາງສິ່ງບາງຢ່າງທີ່ຊາຕານໂຍນໃສ່ພວກເຮົາເຫັນຄຸນຄ່າຕົວເອງຕໍ່າ; ຄວາມເຊື່ອໝັ້ນແມ່ນມາຈາກພຣະວິນຍານບໍຣິສຸດຂອງພຣະເຈົ້າດ້ວຍມີຈຸດປະສົງທີ່ຈະນໍາເຮົາໃຫ້ກັບໃຈແລະຫັນມາຫາພຣະອົງ.

ເມື່ອພວກເຮົາມອບຊີວິດຂອງພວກເຮົາໃຫ້ກັບພຣະຄຣິດ, ພຣະອົງໄດ້ມາຊົງສະຖິດຢູ່ໃນພວກເຮົາໂດຍຜ່ານທາງພຣະວິນຍານບໍຣິສຸດຂອງພຣະອົງ. ເປັນເໝືອນລູກຍິງລູກຊາຍຂອງພຣະອົງ, ພວກເຮົາບໍ່ສາມາດເຮັດບາບອີກຕໍ່ໄປໄດ້ໂດຍປາສຈາກການຊົງນໍາຂອງພຣະວິນຍານບໍຣິສຸດ. ພຣະເຈົ້າຊົງກຽດຊັງບາບ, ດັ່ງນັ້ນເມື່ອພວກເຮົາເຮັດບາບ, ພຣະວິນຍານຂອງພຣະອົງເຮັດໃຫ້ເຮົາມີຄວາມຮູ້ສຶກເຖິງການກະທໍາໂດຍຜ່ານທາງຄວາມເຊື່ອໝັ້ນ. ຈຸດປະສົງຂອງພຣະອົງແມ່ນເພື່ອຟື້ນຟູຈິດໃຈຂອງພວກເຮົາ. ໃນເວລາທີ່ພວກເຮົາເຮັດບາບ, ພຣະວິນຍານບໍຣິສຸດໄດ້ກະຊິບບອກ

ພວກເຮົາວ່າ "ນັ້ນບໍ່ແມ່ນວິທີທີ່ທ່ານຖືກສ້າງຂຶ້ນເພື່ອໃຫ້ດຳເນີນຊີວິດຢ່າງນັ້ນ; ຈົ່ງກັບມາແລະເຊື່ອຟັງພຣະເຈົ້າ." ຊາຕານມັນມີເປົ້າໝາຍອີກຢ່າງນຶ່ງເມື່ອພວກເຮົາເຮັດບາບ; ຄວາມອັບອາຍ, ຜູ້ລໍ້ລວງກັບກາຍເປັນຜູ້ກ່າວຫາ, ແລະມັນຈະເລີ້ມຕັ້ງຄຳຖາມຕ່າງໆເຊັ່ນ "ເຈົ້າໄດ້ເຮັດຜິດອີກຄັ້ງແລ້ວບໍ? ເຈົ້າຄິດວ່າເຈົ້າເປັນຄຣິສຕຽນບໍ?... ເຈົ້າເຄີຍເຮັດຜິດຊໍ້າແລ້ວຊໍ້າອີກຈັກເທື່ອ?... ເຈົ້າເຮັດອີກແລ້ວບໍ່?"

ຢ່າລືມຄວາມຈິງຂໍ້ນີ້: ຄວາມອັບອາຍແມ່ນມາຈາກສັດຕຣູເພື່ອເຮັດໃຫ້ພວກເຮົາເດີນອອກຫ່າງໄກຈາກພຣະເຈົ້າ, ແຕ່ຄວາມເຊື່ອໝັ້ນແມ່ນມາຈາກພຣະວິນຍານບໍຣິສຸດທີ່ຈະຊັກນຳພວກເຮົາໃຫ້ກັບມາຫາພຣະອົງ. ພວກເຮົາສາມາດຫຼີກລ້ຽງທຸກຂໍ້ກ່າວຫາ, ຄວາມອັບອາຍແລະຄວາມອ່ອນນ້ອມຖ່ອມຕົວດ້ວຍການຍຶດໝັ້ນຢ່າງໝັ້ນຄົງແລະຍອມເຊື່ອຟັງພຣະເຈົ້າ. ຜູ້ຂຽນເພງສັຣເສີນໄດ້ເລີ້ມຕົ້ນໃນຂໍ້ 5 ດ້ວຍສຽງຮ້ອງ, ເຖິງຄວາມປາຖນາທີ່ເຕັມໃຈທີ່ຈະຍຶດໝັ້ນໃນຖ້ອຍຄຳຂອງພຣະເຈົ້າ. ມັນເບິ່ງເໝືອນກັບວ່າຜູ້ຂຽນບົດເພງສັຣເສີນກຳລັງຈົ່ມຕໍ່ວ່າຕົນເອງໃນການຜິດພາດຢ່າງຮ້າຍແຮງຂອງຄວາມຄິດ. ສຽງຮ້ອງອອກຈາກຈິດໃຈຂອງລາວແມ່ນການເຮັດຕາມພຣະຄຳຂອງພຣະຜູ້ເປັນເຈົ້າໃນທຸກໆວິນາທີຂອງຊີວິດລາວ! ເປັນຫັຍງ? "ຫຼັງຈາກນັ້ນຂ້ານ້ອຍຈະບໍ່ລະອາຍ" ( ຂໍ້ 6).

ສິ່ງງ່າຍໆ, ອາວຸດທີ່ຍິ່ງໃຫ່ຍທີ່ຈະປົກປ້ອງຈາກແຜນການຂອງຊາຕານທີ່ຈະເຮັດໃຫ້ພວກເຮົາເຮັດບາບແລະຝັງພວກເຮົາໄວ້ໃນຄວາມອັບອາຍແມ່ນການເຊື່ອຟັງພຣະຄຳຂອງພຣະເຈົ້າ. ຜູ້ຂຽນເພງສັຣເສີນໄດ້ໃຫ້ການຍົກຍ້ອງເພາະ ຄວາມປາຖນາຂອງລາວຄືການເຊື່ອຟັງ___ ຄວາມປາຖນາທີ່ພວກເຮົາຄວນຮັບເອົາໄວ້___ ແຕ່ພວກເຮົາຮູ້ຄືກັນກັບຜູ້ຂຽນເພງສັຣເສີນທີ່ໄດ້ກ່າວວ່າການຍຶດໝັ້ນໃນການເຊື່ອຟັງຢ່າງໝັ້ນຄົງນັ້ນອາດຈະຍາກ. ເພາະທຳມະດາບາບຂອງມະນຸດພວກເຮົາມັກຈະເຮັດບາບ, ແຕ່ພວກເຮົາສາມາດອົດທົນກັບການລໍ້ລວງເມື່ອພວກເຮົາເພິ່ງພາໃນພຣະຄຣິດ. ຜູ້ຂຽນເພງສັຣເສີນໄດ້ຮັບຮູ້ທັງຄວາມດີງາມແລະພະລັງຂອງການຍ້ອງຍໍຂອງພຣະເຈົ້າແລະຄວາມຕ້ອງການການຊ່ວຍເຫຼືອຂອງພຣະອົງ. ໃນຂນະທີ່ພວກເຮົາໄດ້ສແວງຫາທີ່ຈະເຊື່ອຟັງ, ພວກເຮົາຄວນອະທິຖານຄືກັນກັບຜູ້ຂຽນເພງສັຣເສີນໄດ້ອະທິຖານວ່າ "ຢ່າປະຖິ້ມຂ້ານ້ອຍຈັກເທື່ອ"(ຂໍ້ 8) ພວກເຮົາຕ້ອງການພະລັງການດຳເນີນຢູ່ຂອງພຣະວິນຍານບໍຣິສຸດໃຫ້ເຊື່ອຟັງ, ແລະເມື່ອພວກເຮົາເພິ່ງພາອາສັຍພຣະອົງ, ມີສິ່ງທີ່ໜ້າອັສຈັນເກີດຂຶ້ນ: ພວກເຮົາຈະບໍ່ໄດ້ຮັບຄວາມອັບອາຍ.

## 3. **ເພງສັນລະເສີນ 119: 9-11**

*9.* ຊາຍໜຸ່ມຈະຮັກສາທາງຂອງຕົນໃຫ້ບໍຣິສຸດໄດ້ຢ່າງໃດໂດຍການເຝົ້າລະວັງຕາມພຣະຄຳຂອງພຣະອົງ.*10.* ຂ້ານ້ອຍສແວງຫາພຣະອົງດ້ວຍສຸດໃຈຂອງຂ້ານ້ອຍຂໍຢ່າໃຫ້ຂ້ານ້ອຍຫຼົງໄປຈາກພຣະບັນຍັດຂອງພຣະອົງ. *11.* ຂ້ານ້ອຍໄດ້ສະສົມພຣະຄຳສັ່ງຂອງພຣະອົງໄວ້ໃນໃຈຂອງຂ້ານ້ອຍເພື່ອຂ້ານ້ອຍຈະບໍ່ເຮັດບາບຕໍ່ພຣະອົງ.

ຂໍໃຫ້ເປັນຄົນສັດຊື່: ຄວາມບາບໃຫ້ຄວາມປິຕິຍິນດີຊົ່ວຂນະນຶ່ງ. ຖ້າມັນບໍ່ໃຫ້ສິ່ງໃດສິ່ງນຶ່ງເປັນທີ່ໜ້າພໍໃຈ, ພວກເຮົາ ກໍຈະບໍ່ຖືກລໍ້ລວງໃຫ້ເຮັດບາບ. ແຕ່ວ່າຄວາມສຸກອັນໃດກໍ່ຕາມທີ່ເກີດຂຶ້ນກໍ່ເຮັດໃຫ້ພໍໃຈແຕ່ຊົ່ວຂນະນຶ່ງແຕ່ສິ່ງທີ່ເຫຼືອຢູ່ກັບຄົນສ່ວນຫຼາຍກໍ່ຄືຄວາມຫວ່າງເປົ່າ. ເປັນຫັຍງ? ເພາະວ່າບາບບໍ່ເຄີຍໃຫ້ຄວາມພໍໃຈ.

ຜູ້ຕິດຕາມຂອງພຣະຄຣິດຍັງເຮັດບາບຢູ່, ແຕ່ເມື່ອພວກເຮົາເຮັດ, ພວກເຮົາກໍ່ຢູ່ໃນຄວາມຫ່ວາງເປົ່າ. ພວກເຮົາສາມາດຢູ່ກັບພຣະວິນຍານບໍຣິສຸດ; ປະຈຸບັນນີ້ພວກເຮົາມີປະຕິກິຣິຍາຕໍ່ຄວາມບາບແຕກຕ່າງຈາກຕອນທີ່ເຮົາຍັງບໍ່ເຊື່ອ. ພວກເຮົາບໍ່ສາມາດເພິ່ງພໍໃຈກັບຄວາມບາບອີກຕໍ່ໄປ. ແຕ່ບາງທີພວກເຮົາອາດສນຸກເພີດເພີນໄປກັບບາບຊົ່ວຂນະເວລາອັນສັ້ນໆ. ແຕ່ພຣະວິນຍານບໍຣິສຸດຈະເຮັດໃຫ້ພວກເຮົາສຳນຶກຜິດແລະກະຕຸ້ນຈິດໃຈໃຫ້ປ່ຽນໃໝ່ເສັຽໃຈກັບການກະທຳນັ້ນ. ໃນຖານະເປັນຜູ້ເຊື່ອ. ຖ້າພວກເຮົາຈະເດີນໄປຕາມເສັ້ນທາງຂອງຄວາມບາບ, ມັນເປັນພຽງກາລະເວລາສັ້ນໆເທົ່ານັ້ນຈົນກ່ວາພວກເຮົາຈະສຳນຶກຂຶ້ນໄດ້ແລະກັບໃຈ. ເປັນດ້ວຍເຫດໃດ? ເພາະພວກເຮົາເປັນລູກຂອງພຣະເຈົ້າແລະພຣະວິນຍານບໍຣິສຸດຜູ້ທີ່ອາສັຍຢູ່ໃນເຮົາຈະບໍ່ປ່ອຍໃຫ້ພວກເຮົາມີຄວາມເພິ່ງພໍໃຈກັບການທຳບາບ.

ຄວາມຈິງໃນຄວາມສວ່າງນີ້, ເປົ້າໝາຍຂອງຜູ້ທີ່ເຊື່ອທຸກຄົນຄວນຕັ້ງໃຈໄວ້ວາງໃຈເຊື່ອຟັງພຣະເຈົ້າແລະເດີນຫ່າງຈາກເສັ້ນທາງຂອງບາບ. ມັນແມ່ນວິທີດຽວທີ່ພວກເຮົາຈະພົບການພັກຜ່ອນແລະຄວາມສງົບສຸກ.

ຢູ່ໃນເພງສັຣເສີນບົດ 119, ຜູ້ຂຽນເພງສັຣເສີນໄດ້ມີການພົວພັນກັບອີກຄັ້ງລະຫວ່າງການດໍາເນີນຊີວິດທີ່ຖືກຕ້ອງແລະການເຊື່ອຟັງພຣະຄໍາຂອງພຣະເຈົ້າ. ຜູ້ຂຽນຮູ້ວ່າບໍ່ມີຄວາມອັບອາຍມາຈາກວິທີທາງຂອງລາວຖ້າລາວຮັກສາຂໍ້ຄໍາສັ່ງແລະກົດບັນຍັດຂອງພຣະເຈົ້າ, ແລະໃນຂໍ້ທີ 9 ລາວໄດ້ກ່າວວ່າຄໍາເວົ້າທີ່ເວົ້າຄ້າຍຄືກັນ, ທີ່ເຊື່ອມຕໍ່ຄວາມບໍຣິສຸດແລະການເຊື່ອຟັງ. ຕາບໃດທີ່ພວກເຮົາຍັງດໍາເນີນຊີວິດຕາມພຣະຄໍາຂອງພຣະເຈົ້າ, ວິຖີຊີວິດຂອງພວກເຮົາຍັງບໍຣິສຸດ. ພວກເຮົາບໍ່ໄດ້ກິນອາຫານເປັນປົກກະຕິແລະບໍ່ໄດ້ຮັບການບໍາລຸງລ້ຽງໂດຍພຣະຄໍາຂອງພຣະເຈົ້າໃນພຣະຄໍາພີ, ພວກເຮົາກໍ່ອາດຈະຖືກລໍ້ລວງແລະເຮັດບາບໄດ້ງ່າຍ. ທຸກວັນນີ້ມຸມມອງທາງວັດທະນະທໍາຂອງໂລກສາມາດມີອິດທິພົນຕໍ່ຄວາມຄິດຂອງພວກເຮົາໄດ້ຢ່າງງ່າຍດາຍ, ເມື່ອພວກເຮົາໄດ້ເພີ້ມເຕີມກໍາລັງຈິດໃຈຂອງພວກເຮົາແລະຮັບການບໍາລຸງລ້ຽງຈິດວິນຍານຂອງພວກເຮົາກັບການເບິ່ງໂລກໃນມຸມມອງຂອງພຣະເຈົ້າ. ໃນທາງກັບກັນ, ເມື່ອພວກເຮົາສະສົມແລະເກັບຮັກສາຖ້ອຍຄໍາຂອງພຣະເຈົ້າໄວ້ໃນໃຈຂອງພວກເຮົາ, ພວກເຮົາກໍ່ຈະມີຄວາມຊຸ່ມຊື່ນຍິນດີກັບຄວາມດີແລະການຈັດຕຽມຂອງພຣະອົງ. ພວກເຮົາບໍ່ມີຫ້ອງຫວ່າງໃຫ້ກັບຄວາມບາບໃນຊີວິດຂອງພວກເຮົາເມື່ອຫົວໃຈຂອງເຮົາເຕັມລົ້ນໄປດ້ວຍຖ້ອຍຄໍາຂອງພຣະເຈົ້າ.

## <u>ນໍາໃຊ້ໃນຊີວິດ</u>:

**ທ່ານຈະຍອມໃຫ້ແມ່ນກະທັ້ງທ່ານຖ້ອຍຄໍາຂອງພຣະເຈົ້າໃຫ້ຄໍາແນະນໍາທີ່ເປັນໜ້າເຊື່ອຖືໄດ້ຢ່າງໃດໃນຊີວິດຂອງທ່ານ? ຈົ່ງເລືອກຂໍ້ນຶ່ງຂອງການນໍາໃຊ້ໃນຊີວິດຕໍ່ລົງໄປນີ້.**

- **ໃຫ້ອ່ານ.** ຖ້າພຣະຄໍາຂອງພຣະເຈົ້າບໍ່ເປັນສ່ວນນຶ່ງໃນຊີວິດຂອງທ່ານ, ຕອນນີ້. ຈົ່ງໃຊ້ເວລາໃນທຸກໆວັນເພື່ອອ່ານພຣະຄັມພີແລະເວລາເຝົ້າດ່ຽວໃຊ້ສະມາທິໃນຂໍ້ຄວາມທີ່ທ່ານອ່ານ. ພຣະກິດຕິຄຸນທີ່ດີຄວນທີ່ຈະເລີ້ມແມ່ນພຣະທໍາໂຢຮັນ. ກ່ອນທີ່ຈະອ່ານ, ອ້ອນວອນອະທິຖານຂໍໃຫ້ພຣະເຈົ້າເວົ້າກັບທ່ານ. ພຣະອົງຊົງຮັກທ່ານແລະຕ້ອງການທີ່ຈະພົບທ່ານໃນເວລານັ້ນ.
- **ສະສົມ.** ພິຈາລະນາຫາວິທີທ່ອງຈໍາພຣະຄໍາຂອງພຣະເຈົ້າສະສົມໄວ້ໃນຫົວໃຈຂອງທ່ານຢ່າງມີປະສິດຕິຜົນ. ຍົກຕົວຢ່າງ, ດາວໂຫຼດພຣະຄັມພີທີ່ມີການອ່ານອອກສຽງແລະຕັ້ງໃຈຟັງໃນລະຫວ່າງທີ່ທ່ານກໍາລັງເຮັດສິ່ງໃດສິ່ງນຶ່ງຫຼືກໍາລັງເດີນທາງຢູ່. ໃຊ້ແອບເຊັ່ນ: ພຣະຄັມພີຂໍ້ຄວນຈໍາເພື່ອຊ່ວຍທ່ານໃຫ້ຈື່ຈໍາ. ຖ້າທ່ານມີລູກໃຫ້ໃຊ້ໂຕະຮັບປະທານອາຫານເປັນໂອກາດສອນລູກຂອງທ່ານກ່ຽວກັບພຣະຄໍາຂອງພຣະເຈົ້າ.
- **ການສອນ.** ມຸ້ງໝັ້ນໃນການສອນພຣະຄໍາຂອງພຣະເຈົ້າຕໍ່ຄົນອື່ນ. ເພີ້ມພູນກຸ່ມຂອງທ່ານໂດຍເລີ້ມຕົ້ນໃນການສຶກສາພຣະຄໍາພີ. ອອກໄປຫາຜູ້ທີ່ບໍ່ທັນມີໂອກາດໄດ້ຮູ້ຈັກເຣື່ອງພຣະຄໍາຂອງພຣະເຈົ້າເພື່ອຊ່ວຍພວກເຂົາຄົ້ນພົບຄໍາແນະນໍາທີ່ຖືກຕ້ອງຈາກພຣະຄໍາຂອງພຣະເຈົ້າ.

ຈົ່ງເຮັດຄືກັບຄຣູສອນທີ່ບໍ່ມີໃບອະນຸຍາດເຫຼົ່ານັ້ນ. ພວກເຮົາອາດຈະບໍ່ຮູ້ສຶກວ່າເຮົາມີຄຸນສົມບັດທີ່ດີທີ່ສຸດທີ່ຈະສອນພຣະຄັມພີຫຼືຈະແບ່ງປັນກັບຄົນອື່ນ. ແຕ່ພຣະເຈົ້າເປັນຜູ້ມີສິດອໍານາດແລະພຣະຄໍາຂອງພຣະອົງເປັນຄໍາຕອບທີ່ພວກເຮົາຕ້ອງການສໍາລັບນໍາພາຂອງພວກເຮົາເອງພ້ອມທັງເປັນສິ່ງທີ່ພວກເຮົາຕ້ອງການສໍາລັບຄົນອື່ນດ້ວຍ.

ອຸປຖັມໂດຍ ລາວຊາວເທີນບັບຕິດສັມພັນ http://lsbf.us ແປໂດຍ VR.